

## ປະຫວັດຄວາມເປັນມາຂອງຊົນເຜົ່າລະເມດ

ປະຫວັດຄວາມເປັນມາຂອງຊົນເຜົ່າລະເມດ ແມ່ນຊົນເຜົ່າຫນຶ່ງທີ່ດຳລົງຊີວິດ ແລະ ຕັ້ງຖິ່ນຖານບ້ານເກີດຢູ່ແຂວງອຸດົມໄຊ ໄດ້ຫຼາຍພັນປີມາແລ້ວ, ບົນເສັ້ນທາງການເຄື່ອນຍ້າຍຂອງຊົນເຜົ່າລະເມດທີ່ມາລະອຽດຈະແຈ້ງ ແນວໃດ ແລະ ມາດ້ວຍວິທີໃດນັ້ນ, ບໍ່ທັນມີນັກຄົ້ນຄ້ວາທ່ານໃດຮູ້ ແລະ ກຳຂໍ້ມູນທີ່ແນ່ນອນເທື່ອ.

ແຕ່ຊົນເຜົ່າລະເມດທີ່ມີຢູ່ແຂວງອຸດົມໄຊ ຊົນເຜົ່າລະເມດ ທີ່ຢູ່ແຂວງອຸດົມໄຊ ບໍ່ມີບ້ານເອກະລາດ, ສ່ວນຫຼວງຫຼາຍແມ່ນຢູ່ບ້ານປະສົມກັບຊົນເຜົ່າອື່ນໆ ໃນເຫດສະບານແຂວງເທົ່ານັ້ນ ເຊັ່ນ: ບ້ານລ້ອງກຳເດື່ອ, ບ້ານດອນໄຊ, ບ້ານ ຫນອງແມງດາ ແລະ ບ້ານອື່ນໆ.

ຊື່ເອີ້ນ: ຊົນເຜົ່າລະເມດ ແມ່ນຊື່ທີ່ເຂົາເຈົ້າກໍ່ມັກ ແລະ ຊົນເຜົ່າອື່ນໆ ກໍ່ເອີ້ນເຂົາເຈົ້າແມ່ນຊົນເຜົ່າລະເມດ, ສ່ວນຄຳສັບທີ່ວ່າ ລະເມດ ມີຄວາມຫມາຍແນວໃດນັ້ນຍັງບໍ່ທັນມີຜູ້ໃດອະທິບາຍໃຫ້ຮູ້ຢ່າງຈະແຈ້ງເທື່ອຍັງແມ່ນບັນຫາທີ່ຈະຕ້ອງໄດ້ສຶກສາຄົ້ນຄ້ວາຕື່ມໃນອານາຄົດຂ້າງຫນ້າ.

ພາສາ: ຊົນເຜົ່າລະເມດມີພາສາປາກເວົ້າສະເພາະຂອງຊົນເຜົ່າຕົນເອງ ແລະ ໄດ້ຈັດຢູ່ໃນກຸ່ມພາສາ ມອນ-ຂະແມ, ຊົນເຜົ່າ ລະເມດຍັງບໍ່ທັນມີຕົວຫນັງສືຂຽນເປັນຂອງຕົນເອງເທື່ອ. ແຕ່ຊົນເຜົ່າລະເມດສາມາດຮູ້ປາກເວົ້າຫຼາຍພາສາ ຂອງຊົນເຜົ່າອື່ນໆ ທີ່ໃກ້ຄຽງຢ່າງສະດວກສະບາຍເປັນຕົ້ນແມ່ນພາສາຂອງເຜົ່າກຶມມຸໄດ້ດີທີ່ສຸດ. ແຕ່ກົງກັນຂ້າມຊົນເຜົ່າກຶມມຸ ແລະ ຊົນເຜົ່າອື່ນໆ. ທີ່ຢູ່ໃກ້ຄຽງຊົນເຜົ່າລະເມດ ພັດບໍ່ຮູ້ພາສາປາກເວົ້າຂອງເຜົ່າລະເມດ.

ຄວາມເຊື່ອຖື, ຮີດຄອງປະເພນີ ແລະ ວັດທະນະທຳ - ສັງຄົມຂອງຊົນເຜົ່າລະເມດ: ຊົນເຜົ່າລະເມດ ມີຄວາມເຄົາລົບນັບຖື ແລະ ບູຊາບັນພະບູລຸດຂອງຕົນ: ຜີພໍ່, ຜີແມ່, ຜີປູ່ຍ່າຕາຍາຍ, ຜີບ້ານ, ຜີເມືອງ ແລະ ຜີອື່ນໆ. ຄືກັນກັບຊົນເຜົ່າກຶມມຸ ແລະ ຊົນ ເຜົ່າບິດ, ສິ່ງໃດທີ່ລຶກລັບທີ່ຊົນເຜົ່າລະເມດບໍ່ສາມາດອະທິບາຍໄດ້ກໍ່ເອີ້ນວ່າ ຜີທັງນັ້ນ ເບິ່ງລວມແລ້ວປະກົດການຂອງທຳມະ ຊາດແຕ່ລະດູການທີ່ບໍ່ສາມາດຮັບຮູ້ໄດ້ກໍ່ເອີ້ນວ່າ ແມ່ນຜີໂລດ.

ຊົນເຜົ່າລະເມດ: ມີປະເພນີຜົວດຽວ-ເມຍດຽວ ແລະ ສືບທອດສາຍຕະກຸນທາງພໍ່ເປັນໃຫຍ່, ແມ່ຍິງ ເມື່ອແຕ່ງດອງແລ້ວ ຈະຕ້ອງໄດ້ໄປຢູ່ເຮືອນພໍ່ປູ່ແມ່ຍ່າ ເພື່ອລ້ຽງດູພໍ່ແມ່ຂອງຜູ້ເປັນຜົວ. ຜູ້ໃດທີ່ມີໂອກາດໄປຮອດໄປ ເຖິງບ້ານຂອງຊົນເຜົ່າລະເມດ ຈະພົບເຫັນໂລດວ່າ: ລະບົບເຮືອນໜຶ່ງ ຫຼື ວ່າຄົວເຮືອນໜຶ່ງຈະມີ 2-3 ຄອບຄົວຢູ່ຮ່ວມກັນເປັນລະບົບຄອບຄົວໃຫຍ່, ຊົນເຜົ່າ ລະເມດມີສອງປະເພດຕະກຸນຈະແຈ້ງຄື: (ໂຕສັດ ແລະ ຜັກກູດ) ເຊັ່ນ: ເສືອ, ເຫງັນ, ນົກ ແລະ ຜັກກູດ. ເຂົາເຈົ້າຈະບໍ່ຂ້າ, ບໍ່ຈັບບໍ່ຂາຍເຖິງຕະກຸນຂອງຕົນເອງຢ່າງເດັດຂາດ.

ຊົນເຜົ່າລະເມດ: ມີຮີດຄອງປະເພນີການປຸກສ້າງເຮືອນຮ້ານ, ໃນເຮືອນຈະແບ່ງເປັນສອງຫ້ອງ: ຫ້ອງຮັບ ແຂກທົ່ວໄປມີເຕົາໄຟແຕ່ງຢູ່ຄົວກິນ ແລະ ຫ້ອງເບື້ອງໃນຫ້ອງ ນອນຂອງພໍ່ແມ່ຈະມີເຕົາໄຟໄວ້ສຳລັບໜຶ້ງເຂົ້າເທົ່ານັ້ນ ບໍ່ໄດ້ຄົວກິນແນວອື່ນ ເດັດຂາດ, ມີຮ້ານບູຊາຜີພໍ່ແມ່ ແລະ ຜີເຮືອນຢູ່ແຈເສົານອນຂອງພໍ່ແມ່, ແຕ່ມາຮອດປັດ ຈຸບັນນີ້ ຊົນເຜົ່າລະເມດຢູ່ແຂວງອຸດົມໄຊ ມີເຕົາໄຟໄວ້ສຳລັບແຕ່ງຢູ່ຄົວກິນ ແລະ ໜຶ້ງເຂົ້າມີພຽງອັນດຽວເທົ່ານັ້ນ ແຕ່ຍັງຮັກສາຮ້ານຜີພໍ່, ແມ່ ແລະ ຜີເຮືອນຢູ່ແຈເຮົານອນ ຂອງພໍ່ແມ່ຄືເກົ່າ.

ຊົນເຜົ່າລະເມດ: ມີຂໍ້ຄະລຳ ຫຼື ຂໍ້ຫ້າມທີ່ສຸດ: ແຂກຄົນທາງນອກ ແລະ ສະມາຊິກພາຍໃນຄອບຄົວບໍ່ໄດ້ລ່ວງ ລະເມີດເຂົ້າຫ້ອງນອນຂອງພໍ່ແມ່ຢ່າງເດັດຂາດ, ເຜົ່າລະເມດມີຮີດຄອງການເກີດລູກມີການຄະລຳ ແລະ ຂໍ້ຫ້າມ ຫຼາຍຢ່າງທີ່ສຸດນັບບໍ່ຖ້ວນ, ເກີດລູກຢູ່ເຮືອນຫ້ອງນອນຂອງຜົວເມຍ ມີຮີດຄອງຢູ່ກຳເດືອນແຄມເຕົາໄຟຄືຊົນເຜົ່າ ອື່ນໆ.

ຊົນເຜົ່າລະເມດ: ມີຮີດຄອງປະເພນີດ້ານພິທີການສົ່ງສະການ ດ້ວຍການຂຸດຂຸມຝັງສົບຄົນຕາຍຢູ່ປ່າຊ້າຂອງ ບ້ານອີກ ນິດໄວ້ເທົ່ານັ້ນ, ບໍ່ໄດ້ຝັງສະຊາຍແບບຊົນເຜົ່າມົ້ງ ແລະ ຊົນເຜົ່າຫໍ້, ບໍ່ມີການຄືບງັນຄົນຕາຍດົນບາງເທື່ອ ຕາຍຕອນເຂົາຕອນ ລາກໍ່ໄປຝັງສົບເລີຍກໍ່ມີ, ການເຮັດໂລງແມ່ນເຮັດຢູ່ໃນປ່າຊ້າຂໍ້ຫ້າມບໍ່ໃຫ້ເອົາໂລງເຂົ້າມາ ເຮືອນເດັດຂາດ.

ດ້ານສິລະປະວັນນະຄະດີ ແລະ ການນຸ່ງຫົ່ມເອ້ຍ້ອງ: ມີລັກສະນະທຳມະດາທີ່ສຸດ, ບໍ່ມີອັນໃດທີ່ຈະພົ້ນ ເດັ່ນ ຖ້າສົມທຽບກັບບັນດາຊົນເຜົ່າອື່ນທີ່ຢູ່ໃນກຸ່ມພາສາປາກເວົ້າອັນດຽວກັນ.

ດ້ານເສດຖະກິດ: ຊົນເຜົ່າລະເມດ ມີອາຊີບໃນການຖາງປ່າເຮັດໄຮ່ປູກເຂົ້າຫນຽວເປັນຕົ້ນຕໍນອກຈາກນີ້ເຂົາເຈົ້າ ຍັງນິຍົມກັນປູກພືດທີ່ເປັນທາດແປ້ງເຊັ່ນ: ສາລີ,ມັນ, ເຜືອກ ແລະ ອື່ນໆ. ເສດຖະກິດສຳຮອງແມ່ນການລ້ຽງສັດ ໃຫຍ່: ງົວ, ຄວາຍ, ແບ້, ຫມູ, ແລະ ສັດປີກຈຳນວນຫນຶ່ງເພື່ອເປັນອາຫານ ແລະ ພິທີກຳຕ່າງໆ. ຂອງຄອບຄົວ, ສຳລັບຜູ້ຊາຍມີຄວາມຊຳນິຊຳນານໃນການເຮັດວຽກຫັດຖະກຳຈັກສານເຄື່ອງໃຊ້ສອຍ ແລະ ຕີເຫຼັກເຄື່ອງຮັບໃຊ້ໃນ ການຜະລິດອື່ນໆ.

ຊົນເຜົ່າລະເມດ: ຜ່ານການເກັບກຳຂໍ້ມູນປະຫວັດຄວາມເປັນມາຮີດຄອງປະເພນີຂອງຊົນເຜົ່າລະເມດສັງເກດ ແລະ ຕີລາຄາໄດ້ບາງດ້ານຄື:ບໍ່ປາກພາສາຂອງຕົນເອງ ດ້ານຄວາມເຊື່ອຖືຂອງຊົນເຜົ່ານີ້ແມ່ນແຕກຕ່າງກັບບັນດາຊົນ ເຜົ່າໃນຫມວດພາສາດຽວກັນເຊັ່ນວ່າ: ບາງປະກົດການທຳມະຊາດທີ່ເກີດຂຶ້ນຊົນເຜົ່າດັ່ງກ່າວກໍ່ຖືວ່າແມ່ນຜີຟ້າ, ຜີແຖນ ເປັນຜູ້ເຮັດການເກີດລູກຂອງຊົນເຜົ່າລະເມດກໍ່ມີຫຼາຍຢ່າງທີ່ຄະລຳ ໂດຍສະເພາະເລື່ອງອາຫານການກິນ ເຊິ່ງ ມັນໄດ້ສົ່ງຜົນສະທ້ອນໂດຍກົງຕໍ່ກັບເດັກທີ່ເກີດໃຫມ່ເຊິ່ງຍັງ ຕ້ອງໄດ້ຮັບການປັບປຸງ ແລະ ປ່ຽນແປງໃຫມ່ບາງ ດ້ານທີ່ບໍ່ຈຳເປັນ ແລະ ຫນັກຫນ່ວງໂພດ.

## History of Lamet Ethnic Group

Lamet people have been living in Ouodmxay province since thousand years ago and no one knows exactly about the background of these people. The Lamet's population in the province is 148 persons – 54 females according to the statistic collected in 2011. Lamet has no specific village, as they live together with other tribal people around.

Lamet is the name that they like the most since the past to present time, but no one knows clearly about the meaning of it. People keep calling them Lamet as well.

They have their own speaking language identified in the linguistic type of Mone – Khmae language. Lamet language has no linguistic writing alphabet. Most of the Lamet people can understand Khmu language, but many Khmu people don't understand Bit language at all. The majority of Lamet people believe, trust and worship their own ancestors and several spiritual powers such as spirit (ghost) of the village, spirit (Ghost) of the house and others.

Father is the key person and also the head of the family and the son is the one who continues to replace the father's position after. Lamet people believe that "one husband – one wife" is a happy life, as it's important to be a good example for the society. Man is the most powerful person in solving problems within the family or outside. Actually, there are two types of Lamet clans such as animal (tiger, civet cat and bird) and vegetable clan (wild curly vegetable). They will not kill or eat the animal or vegetable clan that they are belong to at all.

The house divides into two main rooms "bedroom and kitchen", but there is an addtitional room inside the house designed for visitors. Visitors are not allowed to enter the bedroom without permission. As a rule, a family altar is set up at the main middle post of the house.

Each birth of a new born baby is said to be sent to this world by heaven. The birth takes place in the couple's bedroom and no one but the husband and some expereiced women can be present to assist in her delivery. In the past, a married woman was not allowed to give birth at her parent's house, but at her husband's house or her husband's parent's house. Some experienced women will do their own delivery by themselves sometime at home, garden and farm.

To have a proper funeral is of great importance to the Lamet people, for as a result the soul will prosper in the afterworld. There are many steps for holding a funeral and many duties related are assisted by close relatives and villgers. In addition, some sacrificial animals like pig, buffalo, cattle and chicken will be killed and sacrificed as food during the funeral. The corpse is buried at the village cemetery or somewhere appropriate.

The majority of Lammet people are farmers, so sticky rice and corn cultivation is the major activity of the Lamet people. Livesotcok is considered as the secondary activity. Most of the men are experienced in basketry and other hand made products.